| ຈຸດເດັ່ນໃນການສົມທຽບທັມມະນູນສະບັບເດີມ(January 2020) ແລະ ສະບັບດັດແກ້ ( November 2021) | | |
|---|---|---|
| | ທັມມະນູນສະບັບເດີມ (ມະກະຣາ 2020) | ທັມມະນູນສະບັບດັດແກ້ (ພຶສຈິກາ 2021) |
| ກາໝາຍ | ກາໝາຍອົງການອັນເກົ່າ | ກາໝາຍອົງການອັນໃໝ່ |
| ບໍຣິສັດ ກັບອົງການ | ບໍຣິສັດ | ອົງການ |
| ສະຣະບານ | ບໍ່ມີສາຣະບານ | ຕື່ມສາຣະບານໃສ່ |
| 1.1 ຊື່ | ຣັຖທັມມະນູນ ແລະ ທັມມະນູນ | ທັມມະນູນ |
| 1.2 ວັດຖຸປະສົງມ( ເພີ້ມຂໍ້ 4.) | ອົງການ LGHA ສ້າງຕັ້ງຂຶ້ນພາຍໃຕ້ວັດຖຸປະສົງດ້ານການກຸສົນ, ສາສນາ, ແລະດ້ານການສຶກສາ. **ພາຣະກິດ**ຂອງອົງການ ແມ່ນ“ຄວາມມຸ້ງໝັ້ນສູງ ເພື່ອຮັກສາໄວ້ຊຶ່ງຮີດຄອງປະເພນີລາວ, ມໍຣະດົກລາວ, ແລະ ສົ່ງເສີມພຣະພຸທສາສນນາ ຕລອດເຖິງຄວາມກົມກ່ຽວເປັນອັນນຶ່ງອັນດ່ຽວກັນ. ”ພາຣະກິດແລະເປົ້າໝາຍຂອງອົງການ ມີຄື:<br><br>(1) ຊ່ວຍສົ່ງເສີມຄວາມຖືກຕ້ອງປອງດອງຂອງສັງຄົມລາວ<br>(2) ຊ່ວຍປ້ອງກັນແລະຕໍ່ຕ້ານການກະທຳທີ່ສໍ້ຣາດບຽຫລວງຂອງອົງການທີ່ບໍ່ຫາກຳໄລ 501(C) (3) ການກຸສົນ ເຊັ່ນວັດຊາວພຸດ.<br>(3) ຊ່ວຍອຳນວຍແລະຊຸກຍູ້ຄວາມໂປ່ງໃສ ແລະບໍຣິຫານດ້ານການການເງິນໃຫ້ຖືກຕ້ອງຕາມຣະບຽບການ, ການບໍຣິຫານການຈັດຕັ້ງທີ່ເຂົ້າຣະບົບ, ແລະການເລືອກຕັ້ງຂອງຄນະອຳນວຍການໃນບັນດາອົງການຈັດຕັ້ງທີ່ບໍ່ຫາກຳໄລ 501(C) (3)ການກຸສົນ, ເຊັ່ນວັດຂອງຊາວພຸດ. | ອົງການ LGHA ສ້າງຕັ້ງຂຶ້ນພາຍໃຕ້ວັດຖຸປະສົງດ້ານການກຸສົນ, ສາສນາ, ແລະດ້ານການສຶກສາ. **ວິໃສທັດ**ຂອງອົງການ ແມ່ນ “ຄວາມມຸ້ງໝັ້ນສູງ ເພື່ອຮັກສາໄວ້ຊຶ່ງຮີດຄອງປະເພນີລາວ, ມໍຣະດົກລາວ, ແລະ ສົ່ງເສີມພຣະພຸທສາສນນາ ຕລອດເຖິງຄວາມກົມກ່ຽວເປັນອັນນຶ່ງອັນດ່ຽວກັນ. ”ພາຣະກິດແລະເປົ້າໝາຍຂອງອົງການ ມີຄື:<br><br>1. ສົ່ງເສີມຄວາມຖືກຕ້ອງປອງດອງຂອງປະຊາຄົມຊາວລາວ, ຄວາມກ້າວໜ້າໃນດ້ານສັງຄົມແລະການສຶກສາ.<br>2. ປ້ອງກັນແລະຕໍ່ຕ້ານການເຄື່ອນໄຫວທີ່ທຸຈຣິດໃນບັນດາອົງການຈັດຕັ້ງການກຸສົນທີ່ບໍ່ຫາກຳໄລ 501 (C) 3, ໂຮມທັງວັດວາອາຮາມຊາວພຸດ.<br>3. ຊຸກຍູ້ໃຫ້ມີການບໍຣິຫານການເງິນທີ່ໂປ່ງໃສ, ການບໍຣິຫານຣະບົບການປົກຄອງທີ່ມີປະສິດທິພາບ, ການເລືອກຕັ້ງຄນະອຳນວຍການ |

| | | |
|---|---|---|
| | | ຂອງອົງການການກຸສົນທີ່ບໍ່ຫາກຳໄລ 501 (C) 3, ໂຮມທັງວັດ.<br>4. ອຳນວຍການຊ່ວຍເຫລືອແກ່ຜູ້ທຸກຈົນ, ຂາດເຂີນ ແລະອ່ອນແອທາງດ້ານຮ່າງກາຍ ແລະຈິດໃຈ. |
| 1.4 ຄວາມເປັນເຈົ້າຂອງ | ສົມບັດທັງໝົດ ທີ່ຊື້ຫາມາໄດ້ໂດຍອົງການ, ອົງການຈະເປັນຜູ້ເກັບຮັກສາ, ເປັນເຈົ້າຂອງ ແລະ ອອກຊື່ເປັນຂອງອົງການ.  ສົມບັດທີ່ເປັນອະສັງຫາລິມາຊັບ(ທີ່ດິນ)ຂອງອົງການ ຈະບໍ່ສາມາດຂາຍ ຫລືນຳໃຊ້ ຫລື ປ່ອຍໃຫ້ເປັນທີ່ກັງວົນໃຈໃນທຳນອງໃດນຶ່ງ ຍົກເວັ້ນໄດ້ຮັບການຮັບຜ່ານຈາກສຽງສ່ວນຫລາຍຂອງອົງປະຊຸມຂອງສະມາຊິກທີ່ມີໜ້າໃນກອງປະຊຸມຫລວງສຳລັບການລົງຄວາມເຫັນ. ອົງການຈະບໍ່ອອກໃບສ່ວນແບ່ງ ຫລື ໃບຫຸ້ນສ່ວນໃດໆ,  ໃບຫຸ້ນສ່ວນທັງໝົດ ທີ່ອອກໂດຍອົງການຈະເປັນໂມຄະແລະຖືກລົບລ້າງ. | ສົມບັດທັງໝົດ ທີ່ຊື້ຫາມາໄດ້ໂດຍອົງການ, ອົງການຈະເປັນຜູ້ເກັບຮັກສາ, ເປັນເຈົ້າຂອງ ແລະ ອອກຊື່ເປັນຂອງອົງການ. ສົມບັດທີ່ເປັນອະສັງຫາລິມາຊັບ(ທີ່ດິນ) ຂອງອົງການ ຈະບໍ່ສາມາດຂາຍ ຫລືນຳໃຊ້ ຫລື ປ່ອຍໃຫ້ເປັນທີ່ກັງວົນໃຈໃນທຳນອງໃດນຶ່ງ ຍົກເວັ້ນໄດ້ຮັບການຮັບຜ່ານຈາກສຽງສ່ວນຫລາຍຂອງອົງປະຊຸມຂອງສະມາຊິກທີ່ມີໜ້າໃນກອງປະຊຸມຫລວງສຳລັບການລົງຄວາມເຫັນ. ອົງການຈະບໍ່ອອກໃບສ່ວນແບ່ງ ຫລື ໃບຫຸ້ນສ່ວນໃດໆ, ໃບຫຸ້ນສ່ວນທັງໝົດ ທີ່ອອກໂດຍອົງການຈະເປັນໂມຄະແລະຖືກລົບລ້າງ.<br><br>ບໍ່ມີພາກສ່ວນໃດຂອງເງິນກຳໄລທີ່ຫາມາໄດ້ຂອງອົງການ ຈະນຳໄປໃຊ້ ຫລື ແຈກໃຫ້ເປັນປໂຍດສ່ວນຕົວຂອງສະມາຊິກຜູ້ໃດຜູ້ນຶ່ງ, ຄນະພິທັກຊັບສິນ, ເຈົ້າໜ້າທີ່, ຫລື ເອກຊົນອື່ນໆ, ຍົກເວັ້ນທາງອົງການຈະອານຸຍາດໃຫ້ ເພື່ອຊົດເຊີຍໃຊ້ຄ່າບໍຣິການທີ່ມີເຫດຜົນຕ່າງໆ ແລະເພື່ອຈ່າຍຄ່າຕ່າງໆພາຍໃຕ້ວັດຖຸປະສົງທີ່ລະບຸໄວ້ໃນມາດຕຣາ ສາມ ຕໍ່ໄປ. |

| | | |
|---|---|---|
| | | ບໍ່ມີພາກສ່ວນສຳຄັນໃດຂອງການເຄື່ອນໄຫວຂອງອົງການ ຈະຖືເປັນຫລັກດຳເນີນງານນການໂຄສນາຊວນເຊື່ອ, ຫລືໃນຄວາມພະຍາຍາມເພື່ອຈະໂນ້ມອຽງທາງດ້ານນິຕິບັນຍັດ (ໂຮມທັງການພິມເຜີຍແຜ່ ຫລື ແຈກຢາຍຖແລງການຕ່າງໆ), ແລະອົງການຈະບໍ່ເຂົ້າປະກອບສ່ວນ ຫລືແຊກແຊງໃນການໂຄສນາຫາສຽງດ້ານການເມືອງ ຕ່າງໜ້າຫລືຂັດຄ້ານ ຕໍ່ຜູ້ສມັກແລ່ນເລືອກຕັ້ງເຂົ້າຮັບໃຊ້ຕໍ່າແໜ່ງທາງການໃດນຶ່ງ.<br><br>ເຖິງແມ່ນຈະມີບົດບັນຍັດອື່ນໆໃດນຶ່ງຂອງມາດຕຣາເຫລົ່ານີ້ກໍດີ ແຕ່ອົງການຈະບໍ່ນຳໃຊ້ການເຄື່ອນໄຫວອື່ນໆທີ່ບໍ່ໄດ້ຮັບອະນຸຍາດນັ້ນເພື່ອດຳເນີນງານ (ກ) ໂດຍອົງການໃດນຶ່ງທີ່ຖືກຍົກເວັ້ນການເສັຽພາສີຣາຍໄດ້ ພາຍໃຕ້ ໝວດ Section 501 © 3 ຂອງກົດພາສີຣາຍໄດ້ພາຍໃນປະເທດ ( Internal Revenue Code), ຫລື ໝວດທີ່ກົງກັບກົດພາສີອາກອນແຫ່ງຊາດໃດນຶ່ງໃນອານາຄົດ(corresponding section of any future federal tax code), ຫລື (ຂ) ໂດຍອົງການ ຊຶ່ງການບໍຣິຈາກ ສາມາດຖືກຫັກອອກໄດ້ນັ້ນ ພາຍໃຕ້ໝວດ Section 170©(2) ຂອງກົດພາສີຣາຍໄດ້ພາຍໃນປະເທດ( Internal Revenue Code), ຫລື ໝວດທີ່ກົງກັບກົດພາສີອາກອນແຫ່ງຊາດໃດນຶ່ງໃນອານາຄົດ (corresponding section of any future federal tax code). |

| | | |
|---|---|---|
| 2.1.2 ຄນະກັມມະການບໍຣິຫານ | ເຈົ້າໜ້າທີ່ບໍຣິຫານແລະຜູ້ອໍານວຍການ ປະກອບເປັນຄນະບໍຣິຫານ, ຊຶ່ງຈະມີສິດແລະອໍານາດດໍາເນີນງານຕ່າງໜ້າໃຫ້ຄນະອໍານວຍການຂອງອົງການ ໂດຍມີສິດຕັດສິນທຸກຢ່າງສໍາລັບອົງການ, ແລະ ຄນະອໍານວຍການຕ້ອງມີການປະຊຸມກັນ ເພື່ອເລືອກຕັ້ງໃນວາຣະກາງປີສໍາລັບຕໍ່າແໜ່ງເປົ່າວ່າງ, ແລະເຮັດໃຫ້ແນ່ໃຈວ່າການກະກຽມສໍາລັບກອງປະຊຸມປະຈໍາປີ ແລະກອງປະຊຸມວິສາມັນຕ່າງໆ ໄດ້ມີການລົງມືກັບຮຽບຮ້ອຍແລ້ວ. | 2.3 ຄນະກັມມະການບໍຣິຫານ ແມ່ນຄນະກັມມະການປະຈໍາ ຊຶ່ງໂດຍທົ່ວໄປຈະພົບປະກັນເປັນປະຈໍາ. ຄນະກັມມະການບໍຣິຫານ ປະກອບດ້ວຍຄນະອໍານວຍການ, ບັນດາເຈົ້າໜ້າທີ່ ແລະປະທານຈາກທຸກໆຄນະກັມມະການຖາວອນ. ຄນະກັມມະການບໍຣິຫານ ຈະປະຕິບັດງານແທນສໍາລັບວຽກງານໃນຫລາຍບໍຣິເວນທີ່ເປັນການຫຍຸ້ງຍາກສໍາລັບຄນະອໍານວຍການທີ່ຄົບຄນະ ຈະສາມາດກະທໍາໄດ້.<br><br>ໜ້າທີ່ບົດບາດແລະຄວາມຮັບຜິດຊອບຂອງຄນະບໍຣິຫານ ມີຄື:<br>1. ປະຕິບັດງານຕ່າງໜ້າຄນະອໍານວຍການທັງໝົດ ໂດຍມີສິດແລະອໍານາດເພື່ອປະຕິບັດແລະທໍາການຕັດສິນໃຈຕາງຄນະອໍານວຍການທັງໝົດ. ສິດແລະອໍານາດດັ່ງກ່າວ ແມ່ນກວມໄປເຖິງການພົບປະສົນທະນາກັບບັນດາຜູ້ບໍຣິຈາກ, ສື່ມ່ວນຊົນ, ແລະສາທາຣະນະຊົນ.<br>2. ປະຕິບັດການໃນຖານະກັມມະການທີ່ຊຸກຍູ້ໃຫ້ມີການເຄື່ອນໄຫວ(steering committee) ໂດຍສເນີແນະທິດທາງແກ່ຄນະອໍານວຍການ, ໃຫ້ໄປໃນທາງປະເດັນທີ່ມີຄວາມສໍາຄັນທີ່ສຸດ, ແລະຊ່ວຍຈັດວາງອັນດັບ |

| | | |
|---|---|---|
| | | ບູຣິມະສິດຂອງຫົວຂໍ້ປະຊຸມຂອງຄນະອຳນວຍການ.<br>3. ຮັບໃຊ້ໃນຖານະເປັນທີ່ປຶກສາໃຫ້ແກ່ຄນະອຳນວຍການ.<br>4. ດຳເນີນການຄົ້ນຄ້ວເພື່ອຊ່ວຍໃນການວາງແຜນຍຸທະສາດໃນປະເດັນຕ່າງໆ ຖ້າຈຳເປັນ, ໂຮມທັງປະເດັນ<br>ຕ່າງໆດ້ານການບໍກຄອງ.<br>5. ຕີຣາຄາຄວາມຄືບໜ້າຂອງອົງການໃນດ້ານເປົ້າໝາຍຍຸທະສາດຕ່າງໆແລະການຄົ້ນຄິດລິເລີ້ມຕ່າງໆ,<br>6. ເບິ່ງແຍງລວມວຽກງານຂອງອົງການທັງໝົດ ເພື່ອໂຮມເອົາການກຳກັບນະໂຍບາຍຕ່າງໆຂອງຄນະອຳນວຍການແລະເພື່ອໃຫ້ແນ່ໃຈໃນການປະຕິບັດງານທີ່ຖືກຕ້ອງຕາມຣະບຽບແບບແຜນ.<br>7. ສ້າງຕັ້ງແລະກຳນົດຄນະກັມມະການແລະໜ່ວຍງານ ໂດຍໃຫ້ແນ່ໃຈວ່າສະມາຊິກຂອງຄນະອຳນວຍການໃຫ້ຮັບໃຊ້ຢ່າງນ້ອຍໃນຄນະກັມມະການໃດນຶ່ງ.<br>8. ໃຫ້ແນ່ໃຈວ່າໜ່ວຍງານທັງຫລາຍແລະຄນະກັມມະການຕ່າງໆ ແມ່ນມີຄວາມຈຳເປັນແລະປະສິດທິຜົນ.<br>9. ພິຈາຣະນາປະເດັ່ນຣະດັບສູງ ທີ່ມີລັກຊະນະສຳຄັນ ໂດຍມີການຮັບ |

| | | |
|---|---|---|
| | | ຟັງບັນຫາກ່ອນ ແລ້ວຈຶ່ງທຳການຕັດສິນໃຈໃຫ້ດີທີ່ສຸດໃນຂັ້ນຕໍ່ໄປ.<br>10. ເອົາບົດບາດນຳໃນການອຳນວຍຄວາມຮູ້ແລະການພັທນາແກ່ສະມາຊິກຂອງຄນະອຳນວຍການເພື່ອໃຫ້ແນ່ໃຈໃນປະສິດທິພາບຂອງການນຳພາ ແລະການປະຕິບັດງານທີ່ຖືກຕ້ອງຕາມຣະບຽບແບບແຜນ. ເອົາບາດກ້າວນຳພາ ເພື່ອໃຫ້ແນ່ໃຈວ່າຄນະຜູ້ອຳນວຍການໄດ້ຮຽນຮູ້ແລະຮອບຮູ້ກ່ຽວກັບຄວາມຮັບຜິດຊອບຂອງຕົນ ແລະຄນະກັມມະການ ກໍເອົາຄວາມຮັບຜິດຊອບໃນການຕິດຕາມອີກທີ່ວ່າ ຄນະຜູ້ອຳນວຍການຄວນທຳການຕີຣາຄາຕົນເອງທຸກປີ. |
| 6.Committees<br>ຄນະກັມມະການຕ່າງໆ | (1) **<u>ຄນະບໍຣິຫານ.</u>** ຄນະອຳນວຍການມີສິດແລະອຳນາດໂດຍຜ່ານການລົງມະຕິກັນແຕ່ງຕັ້ງຄນະບໍຣິຫານ ທີ່ປະກອບດ້ວຍ ປະທານ, ຮອງປະທານ. ເລຂາທິການ, ແລະນາຍຄັງ ຜູ້ຊຶ່ງຈະມີສິດປະຕິບັດສິດແລະອຳນາດຂອງຄນະອຳນວຍການໄດ້ເພື່ອບໍຣິຫານທູຣະກິດຂອງອົງການ ໂດຍອີງຕາມທີ່ບົ່ງໄວ້ໃນມະຕິນັ້ນ ໃນຣະຫວ່າງກອງປະຊຸມຕ່າງໆຂອງຄນະອຳນວຍການ.<br>(2) **<u>ກັມມະການກົດຣະບຽບປົກຄອງແລະການເງິນ</u>**. ປະທານສາມາດແຕ່ງຕັ້ງຄນະກັມມະການປົກຄອງແລະການເງິນໄດ້ໂດຍຜ່ານຄວາມຄວາມເຫັນພ້ອມຂອງຄນະອຳນວຍການ.<br>(3) **<u>ກັມມະການປະຊາສັມພັນແລະຫາຣາຍໄດ້.</u>** ປະທານສາມາດແຕ່ງຕັ້ງຄນະກັມມະການປະຊາສັມພັນແລຫາ | **6. ຄນະກັມມະການຕ່າງໆ**<br><br>ອົງການ ພັນທະມິດນໍຣະດິກລາວທົ່ວໂລກປະຕິບັດຕາມໂຄງຮ່າງ-ສາມຄນະກັມມະການງ່າຍໆ ທີ່ປະກອບດ້ວຍຄນະກັມມະການກິຈການພາຍໃນ, ກັມມະການພາຍນອກ, ແລະ ກັມມະການດ້ານການປົກຄອງ. |

| | | |
|---|---|---|
| | ຣາຍໄດ້ໄດ້ ໂດຍຜ່ານຄວາມເຫັນດີຂອງຄນະອຳນວຍການ.<br>(4) **<u>ກັມມະການສເນີແລະເລືອກຕັ້ງ</u>.** ປະທານສາມາດແຕ່ງຕັ້ງຄນະກັມມະການສເນີແລະເລືອກຕັ້ງໄດ້ ໂດຍຜ່ານຄວາມເຫັນດີຂອງຄນະອຳນວຍການ.<br>(5) **<u>ກັມມະການອື່ນໆ</u>.** ປະທານສາມາດແຕ່ງຕັ້ງຄນະກັມມະການປະຈຳ ແລະຊົ່ວຄາວໄດ້ ໂດຍຜ່ານຄວາມເຫັນດີຂອງຄນະອຳນວຍການ. ຄນະອຳນວຍການອາດມອບສິດແລະອຳນາດຂອງຄນະອຳນວຍການໃຫ້ແກ່ຄນະດັ່ງກ່າວ ຖ້າເຫັນວ່າສົມຄວນແລະເໝາະສົມ ຊຶ່ງຈະຣະບຸໄວ້ໃຫ້ເອງ.<br>(6) **<u>ການບັນທຶກເອກສານ</u>.** ຄນະກັມມະການທັງໝົດຈະຕ້ອງເກັບຮັກສາບັນທຶກຣາຍງານລະອຽດກອງປະຊຸມຂອງພວກຕົນ ພ້ອມດຽວກັນກໍ່ສົ່ງສະບັບນຶ່ງໃຫ້ອົງການ ຫລືເລຂາທິການ. ແຕ່ລະຄນະກັມມະການຈະຕ້ອງຣາຍງານເປັນລາວລັກອັກສອນໃຫ້ຄນະອຳນວຍການຜ່ານ ປະທານ ຫລື ຫົວໜ້າບໍຣິຫານ(executive director).<br>(7) **<u>ຜູ້ປະກອບຄນະກັມມະການທີ່ທຳໜ້າທີ່ຕ່າງໆຂອງຂອງຄນະອຳນວຍການ</u>.** ຄນະກັມມະການໃດນຶ່ງທີ່ທຳໜ້າທີ່ຂອງຄນະອຳນວຍການ ຈະຕ້ອງມີຢ່າງນ້ອຍໂຮມທັງ (1) ຜູ້ອຳນວຍການຜູ້ນຶ່ງ, ເລືອກຕັ້ງໂດຍຄນະອຳນວຍການດ້ວຍສຽງສ່ວນຫລາຍ ຊຶ່ງລະບຸໃນທັມມະນູນ.<br>(8) **<u>ຂໍ້ຈຳກັດສິດແລະອຳນາດຂອງຄນະກັມມະການຕ່າງໆ</u>.** ບໍ່ມີຄນະກັມມະການໃດນຶ່ງທີ່ສາມາດ: (ກ) ອະນຸຍາດການຈ່າຍເງິນປັນຜົນ ຫລື ເງິຍຣາຍໄດ້ ຫລື ກຳໄລສ່ວນນຶ່ງໃດຂອງອົງການ ໃຫ້ແກ່ຄນະອຳນວຍການ ຫລືເຈົ້າໜ້າທີ່ບໍຣິຫານໄດ້; (ຂ) ອະນຸຍາດການຍຸບ, ການໂຮມເຂົ້າ ຫລື ການຂາຍ, ໃຫ້ສັນຍາ ຫລື ໂອນຊັບສົມບັດທັງໝົດ ຫລືສ່ວນຫລາຍຂອງສົມບັດຂອງອົງການໄດ້; (ຄ) ເລືອກຕັ້ງ, ແຕ່ງຕັ້ງ ຫລື ຖອນຜູ້ອຳນວຍການ ຫລື ບັນຈຸຄນະຜູ້ອຳນວຍການ ຫລື ຄນະບໍຣິຫານທີ່ຫວ່າງເປົ່ານັ້ນໄດ້; ຫລື (d) ຮັບຮອງເອົາ, ດັດແປງ ຫລື ລົບລ້າງມາດຕຣາຕ່າງໆ, | **6.1 ຈຸດປະສົງຂອງຄນະກັມມະການ**<br><br>ຄນະກັມມະການແລະລັກສະນະແລະຂອບເຂດຂອງໜ້າທີ່ຂອງພວກຕົນ ຈະຖືກກຳນົດຕາມທີ່ຄນະອຳນວຍການຄິດເຫັນວ່າຈຳເປັນ ເພື່ອຊຸກຍູ້ແລະສົ່ງເສີມວັດຖຸປະສົງຂອງອົງການ. ເປົ້າໝາຍຕ່າງໆ, ການເຄື່ອນໄຫວ ແລະການຈັດຕັ້ງຄນະກັມມະການຕ່າງໆ ຈະຖືກກຳນົດຕາມກົດບັດຂອງໃຜລາວ.<br><br>**6.2 ປະເພດຂອງຄນະກັມມະການ**<br><br>ຄນະກັມມະການປະເພດຕ່າງໆຕໍ່ໄປນີ້ ຈະຖືກນຳໃຊ້ໂດຍອົງການໃນການດຳເນີນກິຈການຕ່າງໆຂອງຕົນ.<br>(1) **<u>ຄນະກັມມະການປະຈຳ</u>.** ຄນະອຳນວຍການ ອາດຕັ້ງຄນະກັມມະການປະຈຳຂຶ້ນ ເພື່ອອຳນວຍການດຳເນີນກິດທຸຣະທີ່ມີລັກສະນະຕໍ່ເນື່ອງແລະເກີດຂຶ້ນເລື້ອຍໆ. ບໍ່ດັ່ງນັ້ນ, ກິດທຸຣະຊຶ່ງອາດຖືກມອບໝາຍໃຫ້ແກ່ຄນະກັມມະການປະຈຳນັ້ນ ຄນະອຳນວຍການອາດປະກອບການເອງ.<br><br>ກັມມະການປະຈຳ ອາດມີໂຮມທັງກັມມະການກວດສອບ, ກັມມະການສເນີແລະເລືອກຕັ້ງ, ກັມມະການສະມາຊິກພາບ, ແລະ ກັມມະ |

| | | |
|---|---|---|
| | ທັມມະນູນສະບັບນີ ຫລື ມະຕິໃດນຶ່ງຂອງຄນະອຳນວຍການໄດ້. | ການອື່ນໆທີ່ຖືກຮັບຜ່ານໂດຍຄນະອຳນວຍການ. ຫລັງຈາກສ້າງຕັ້ງຂຶ້ນມາແລ້ວ, ຄນະກັມມະການປະຈຳເຫລົ່ານີ້ ຈະຖືວ່າເປັນກັມມະການຖາວອນ ຈົນກວ່າຈະຖືກລົບລ້າງໂດຍຄນະອຳນວຍການ.<br>ຄນະກັມມະການປະຈຳ ອາດມີຄນະອະນຸກັມມະການຕ່າງໆ ເວລາເກີດມີປະເດັນທີ່ເຮັດໃຫ້ເຫັນວ່າຖືກຕ້ອງເໝາະສົມນັ້ນ.<br><br>(2) **<u>ກັມມະການທີ່ຖືກເລືອກຂຶ້ນສະເພາະ.</u>** ຄນະອຳນວຍການ ອາດຕັ້ງກັມມະການທີ່ຖືກເລືອກ ເພື່ອພິຈາຣະນາເຣື່ອງຕ່າງໆບົນພື້ນຖານຊົ່ວຄາວ (on an ad hoc basis ). ອາຍຸການຂອງແຕ່ລະກັມມະການດັ່ງກ່າວ ຈະດຳເນີນການຕໍ່ໄປ ຈົນກ່ວາ ພາຣະກິດທີ່ຖືກມອບໝາຍສະເພາະນັ້ນຈະເສັດສິ້ນລົງ. ບໍຣິເວນເຣື້ອງທີ່ດຳເນີນຢູ່ນັ້ນ ໂດຍມາກຈະບໍ່ແມ່ນອັນດຽວກັນກັບທີ່ປະຕິບັດໂດຍຄນະກັມມະການປະຈຳ. |

<table>
<tr>
<td></td>
<td></td>
<td>
6.3 ຄນະກັມະການກິຈການພາຍໃນ<br><br>
ຄນະກັມມະການກິຈການພາຍໃນ ກຳກັບນຳປະເດັນພາຍໃນແລະການປະຕິບັດງານທັງໝົດ. ຄນະກັມມະການດັ່ງກ່າວ ມີຄື:<br>
1. ກັມມະການຝ່າຍການເງີນ. ປະທານ ອາດແຕ່ງຕັ້ງຄນະກັມມະການງເງີນຂຶ້ນ ໂດຍຄວາມເຫັນພ້ອມຂອງຄນະອຳນວຍການ..<br>
2. ກັມມະການອູ້ມຊູດ້ານກົດໝາຍ. ປະທານ ອາດແຕ່ງຕັ້ງຄນະອູ້ມຊູດ້ານກົດໝາຍ ໂດຍຄວາມເຫັນພ້ອມຂອງຄນະອຳນວຍການ..<br>
3. ກັມມະການສເນີແລະເລືອກຕັ້ງ. ປະທານ ອາດແຕ່ງຕັ້ງຄນະກັມມະການສເນີແລະເລືອກຕັ້ງ, ໂດຍການເຫັນພ້ອມຂອງຄນະອຳນວຍການ.<br>
4. ກັມມະການສະມາຊິກກະພາບ. ປະທານ ອາດແຕ່ງຕັ້ງຄນະກັມມະການສະມາຊິກກະພາບ, ໂດຍການເຫັນພ້ອມຂອງຄນະອຳນວຍການ.<br>
5. ກັມມະການຂຍາຍຕາໜ່າງໃນຂົງເຂດ. ປະທານ ອາດແຕ່ງຕັ້ງຄນະກັມມະການຂຍາຍຕາໜ່າງໃນຂົງເຂດ, ໂດຍການເຫັນພ້ອມຂອງຄນະອຳນວຍການ.<br>
6. ກັມມະການດ້ານດົນຕຣີ, ອັນນະຄະດີ ແລະ ສິລປະລາວ. ປະທານ
</td>
</tr>
</table>

| | | |
|---|---|---|
| | | ອາດແຕ່ງຕັ້ງຄນະກັມມະການດ້ານດົນຕຣີ, ວັນນະຄະດີ, ແລະສິລປະລາວ, ໂດຍການເຫັນພ້ອມຂອງຄນະອຳນວຍການ.<br>7. ກັມມະການກິຈການສາສນາແລະວັທນາທັມລາວ. ປະທານ ອາດແຕ່ງຕັ້ງຄນະກັມມະການກິຈການດ້ານສາສນາ ແລະວັທນາທັມລາວ, ໂດຍການເຫັນພ້ອມຂອງ<br>ຄນະອຳນວຍການ.<br><br>**6.4 ຄນະກັມມະການກິຈການພາຍນອກ.**<br><br>ຄນະກັມມະການກິຈການພາຍນອກ ກຳກັບນຳປະເດັນກິຈການພາຍນອກທັງໝົດ. ຄນະກັມມະການດັ່ງກ່າວ ປະກອບດ້ວຍ<br>ກັມມະການຕ່າງໆ ດັ່ງຕໍ່ລົງໄປນີ້:<br>1. **ກັມມະການກວດກາບັນຊີ.** ປະທານ ອາດແຕ່ງຕັ້ງຄນະກັມມະການກວດກາບັນຊີ, ໂດຍຄວາມເຫັນພ້ອມຂອງຄນະອຳນວຍການ.<br>2. **ຄນະກັມມະການຫາຣາຍໄດ້.** ປະທານ ອາດແຕ່ງຕັ້ງຄນະກັມມະການຫາຣາຍໄດ້ , ໂດຍຄວາມເຫັນພ້ອມຂອງຄນະອຳນວຍການ. |

| | | |
|---|---|---|
| | | 3. **<u>ຄະນະກັມມະການຊອກແຫລ່ງ ລັ້ພຍາກອນ</u>.** ປະທານ ອາດ ແຕ່ງຕັ້ງຄະນະກັມມະ ການຊອກແຫລ່ງລັ້ພຍາ ກອນ, ໂດຍຄວາມເຫັນພ້ອມ ຂອງຄະນະອຳນວຍການ.<br>4. **<u>ຄະນະກັມມະການປະຊາສັມ ພັນ</u>.** ປະທານ ອາດແຕ່ງຕັ້ງ ຄະນະກັມມະການປະຊາສັມ ພັນ, ໂດຍຄວາມເຫັນພ້ອມ ຂອງຄະນະອຳນວຍການ.<br><br>**6.5 ຄະນະກັມມະການອື່ນໆ**<br><br>ຄະນະກັມມະການປະຈຳ ຫລື ກັມມະການ ເພີ້ມເຕີມຊົ່ວຄາວ (ad hoc committees) ອາດຖືກແຕ່ງຕັ້ງຂື້ນໂດຍປະທານ ດ້ວຍ ຄວາມເຫັນພ້ອມຂອງຄະນະອຳນວຍການ. ຄະນະອຳນວຍການ ອາດມອບອຳນນາດໃຫ້ ຄະນະກັມມະການເຫລົ່ານີ້ ຕາມທີ່ຕົນເຫັນ ວ່າເໝາະສົມ, ໂດຍປະຕິບັດຕາມເງື່ອນໄຂ ທີ່ບັ່ລຍາຍໄວ້ໂດຍຄະນະອຳນວຍການ. |
| ເພີ່ມ ມາດຕຣາ XIII – ວ່າດ້ວຍການບຸບເລີກອົງການ | | ບັນການຍຸບອົງການ, ຊັບສົມບັດ ຈະຖືກ ແຈກຢາຍສຳລັບຈຸດປະສົງຍົກເວັ້ນພາ ສີນຶ່ງໃດ ຫລືຫລາຍກວ່ານັ້ນ ພາຍໃນຂໍ້ກຳ ນົດຂອງໝວດ section 501(c) 3 ຂອງກົດພາສີຣາຍໄດ້ພາຍໃນປະເທດ (Internal Revenue Code), ຫລື ໝວດ ທີ່ກ່ຽວຂ້ອງຂອງກົດພາສີອາກອນແຫ່ງ ຊາດໃນອານາຄົດ(corresponding |

| | | |
|---|---|---|
| | | section of any future federal tax code), ຫລື ອາດຈະຖືກແຈກຢາຍສໍາລັບຜົນປໂຍດສາທາຣະນະ ໃຫ້ຣັຖບານກາງ, ຫລືຣັດ ຫລືທ້ອງຖິ່ນກໍໄດ້. ສໍາລັບຊັບສົມບັດໃດທີ່ຍັງບໍ່ຖືກເປີດເຜີຍ, ກໍຈະຖືກເປີດເຜີຍຢູ່ໃນສານທີ່ມີສິດອໍານາດຂອງປະເທດ ໃນເຂດທີ່ສໍານັກງານຂອງອົງການຕັ້ງຢູ່ນັ້ນ ແລະເພື່ອຈຸດປະສົງທີ່ວ່ານີ້ ຫລືອົງການທີ່ວ່ານີ້ໂດຍສະເພາະ, ຕາມການລົງຄວາມເຫັນຂອງສານ, ຊຶ່ງຈັດຕັ້ງຂຶ້ນແລະດໍາເນີນທູຣະກິດສະເພາະສໍາລັບຈຸດປະສົງເຊັ່ນວ່ານີ້. |
| | | |
| | | |
| | | |
| | | |